ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານເລກທີ................/ລບ
ນະຄອນຫຼວງວຽງຈັນ,ວັນທີ............. 2023

# ຮ່າງ
# ດຳລັດ
# ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍແລະລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານສະບັບເລກທີ03/ສພຊ, ລົງວັນທີ16ພະຈິກ2021;
- ອີງຕາມກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດສະບັບເລກທີ 60/ສພຊ, ວັນທີ 14ກໍລະກົດ2015;
- ອີງຕາມໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ............./ອຄ, ລົງວັນທີ .......... 2023.

## ລັດຖະບານອອກດຳລັດ:

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການປັບໃໝ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນທາງທຸລະກິດ ເພື່ອເປັນບ່ອນອີງໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການປັບໃໝ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການແຂ່ງຂັນທາງທຸລະກິດຖືກຕ້ອງຕາມກົດໝາຍ,ປົກປ້ອງຜົນປະໂຫຍດຂອງຜູ້ຊົມໃຊ້ ແລະ ຜູ້ດຳເນີນທຸລະກິດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແມ່ນມາດຕະການທາງດ້ານການເງິນທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບການແຂ່ງຂັນທາງທຸລະກິດ.

ການນຳໃຊ້ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການເພີ່ມຈາກມາດຕະການປັບໃໝຕໍ່ຜູ້ລະເມີດທາງດ້ານບໍລິຫານ ເປັນຕົ້ນ ການໂຈະ, ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນທີ່ກ່ຽວຂ້ອງ, ການຍຶດສິນຄ້າ, ພາຫະນະ ແລະ ຜົນກຳໄລທີ່ໄດ້ຮັບຈາກການລະເມີດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຜົນກຳໄລທີ່ໄດ້ຮັບຈາກການລະເມີດ**ໝາຍເຖິງຜົນກຳໄລເລີ່ມແຕ່ເວລາມີພຶດຕິກຳລະເມີດໂດຍຜ່ານການພິສູດທາງດ້ານກົດໝາຍແລະເສດຖະສາດ;

2. **ລາຍຮັບທັງໝົດຂອງປີຜ່ານມາ**ໝາຍເຖິງລາຍຮັບທີ່ໄດ້ຈາກການດຳເນີນທຸລະກິດ ໂດຍຜ່ານການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;

3. **ການໃຫ້ອອກມາສາລະພາບຕໍ່ສັງຄົມ**

4. **ການປັບປຸງໂຄງສ້າງຂອງວິສາຫະກິດ**

**ມາດຕາ 4 ຫຼັກການກ່ຽວກັບການປັບໃໝແລະນຳໃຊ້ມາດຕະການອື່ນ**

ການປັບໃໝ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍແລະລະບຽບການ;
2. ຄຸ້ມຄອງແບບລວມສູນແລະເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳແລະສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດ ຢູ່ ສປປ ລາວ.

## ໝວດທີ2
## ອັດຕາການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການແຂ່ງຂັນທາງທຸລະກິດ

**ມາດຕາ 6 ການເຮັດໃຫ້ເຂົ້າໃຈຜິດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຮັດໃຫ້ເຂົ້າໃຈຜິດ ໂດຍການເຮັດໃຫ້ຜູ້ຊົມໃຊ້ ສັບສົນ ແລະ ເຂົ້າໃຈຜິດກ່ຽວກັບ ເຄື່ອງໝາຍ, ຍີ່ຫໍ້, ແຫຼ່ງກຳເນີດ, ການຫຸ້ມຫໍ່, ສະຫຼາກ ແລະ ອື່ນໆ ຂອງສິນຄ້າ ຫຼື ການບໍລິການ ວ່າຖືກຕ້ອງ, ໄດ້ມາດຕະຖານ ຫຼື ໄດ້ຈົດທະບຽນແລ້ວຈະຖືກປັບໃໝ 50.000.000 ກີບ.

**ມາດຕາ 7 ການລະເມີດຄວາມລັບທາງທຸລະກິດ**

ບຸກຄົນ ຫຼື ນິຕິບຸກຄົນທີ່ລະເມີດຄວາມລັບທາງທຸລະກິດຂອງວິສາຫະກິດອື່ນ ເພື່ອເອົາປຽບດ້ານການແຂ່ງຂັນດ້ວຍການເຂົ້າເຖິງ ແລະ ເອົາຄວາມລັບທາງທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ, ການເປີດເຜີຍ ແລະ ການນຳໃຊ້ຂໍ້ມູນທາງທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ, ການລະເມີດສັນຍາກ່ຽວກັບການຮັກສາຄວາມລັບທາງທຸລະກິດ, ການສວຍໃຊ້ຄວາມເຊື່ອຖືຂອງຜູ້ມີໜ້າທີ່ຮັກສາຄວາມລັບ ເພື່ອເຂົ້າເຖິງ ແລະ ເອົາຄວາມລັບທາງທຸລະກິດ ຈະຖືກປັບໃໝ75.000.000 ກີບ.

**ມາດຕາ 8 ການບັງຄັບໃນການດຳເນີນທຸລະກິດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ບັງຄັບໃນການດຳເນີນທຸລະກິດ ໂດຍການໃຊ້ ເລ່ຫຼ່ຽມ, ຄຳສັ່ງ ຫຼື ນາບຂູ່ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ວິສາຫະກິດອື່ນ ກະທຳ ຫຼື ບໍ່ກະທຳ ສິ່ງໃດສິ່ງໜຶ່ງທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດ ປະສົງຂອງວິສາຫະກິດທີ່ຖືກບັງຄັບນັ້ນຈະຖືກປັບ50.000.000 ກີບ.

**ມາດຕາ 9 ການເຮັດໃຫ້ຜູ້ດຳເນີນທຸລະກິດອື່ນເສື່ອມເສຍຊື່ສຽງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຮັດໃຫ້ຜູ້ດຳເນີນທຸລະກິດອື່ນເສື່ອມເສຍຊື່ສຽງ ໂດຍການໃສ່ຮ້າຍປ້າຍສີຜູ້ດຳເນີນທຸລະກິດອື່ນດ້ວຍການເຜີຍແຜ່ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ໂດຍທາງກົງ ຫຼື ທາງອ້ອມ ທີ່ສົ່ງຜົນກະທົບບໍ່ດີຕໍ່ການດຳເນີນທຸລະກິດຈະຖືກປັບໃໝ50.000.000 ກີບ.

**ມາດຕາ 10 ການສ້າງອຸປະສັກຂັດຂວາງຕໍ່ການດຳເນີນທຸລະກິດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງອຸປະສັກຂັດຂວາງຕໍ່ການດຳເນີນທຸລະກິດ ໂດຍການສ້າງຄວາມຫຍຸ້ງຍາກ ເປັນຕົ້ນ ການເຂົ້າເຖິງແຫຼ່ງທຶນ, ແຫຼ່ງວັດຖຸດິບ, ເຕັກໂນໂລຊີຂໍ້ມູນຂ່າວສານ ໂດຍທາງກົງ ຫຼື ທາງອ້ອມ ໃຫ້ແກ່ການດຳ ເນີນທຸລະກິດຂອງຜູ້ດຳເນີນທຸລະກິດອື່ນຈະຖືກປັບໃໝ50.000.000 ກີບ.

**ມາດຕາ 11 ການໂຄສະນາທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໂຄສະນາທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ໂດຍການເຜີຍແຜ່ຂໍ້ມູນ ກ່ຽວກັບການຜະລິດ, ຄຸນລັກສະນະ, ຄຸນນະພາບ ຂອງສິນຄ້າ ແລະ ການບໍລິການ ທີ່ບໍ່ຖືກຕ້ອງ, ບິດເບືອນ ຫຼື ເກີນຄວາມເປັນຈິງ ທີ່ແຕະຕ້ອງຜົນປະໂຫຍດຂອງຜູ້ດຳເນີນທຸລະກິດອື່ນ ແລະ ຜູ້ຊົມໃຊ້ຈະຖືກປັບໃໝ50.000.000 ກີບ.

**ມາດຕາ 12 ການສົ່ງເສີມການຂາຍດ້ວຍວິທີທີ່ບໍ່ເປັນທຳ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົ່ງເສີມການຂາຍດ້ວຍວິທີທີ່ບໍ່ເປັນທຳ ໂດຍການໂຄສະນາ ຫຼື ໃຊ້ພຶດຕິກຳໃດໜຶ່ງທີ່ ຫຼອກລວງ ເພື່ອໃຫ້ຜູ້ຊົມໃຊ້ຫັນມາຊື້ສິນຄ້າ ຫຼື ໃຊ້ການບໍລິການຂອງຕົນຫຼາຍຂຶ້ນ ດ້ວຍວິທີການເປັນຕົ້ນ ປະກາດວ່າໃຫ້ລາງວັນ ແຕ່ບໍ່ໃຫ້, ໃຫ້ທົດລອງໃຊ້ສິນຄ້າ, ບໍລິການໂດຍບໍ່ຄິດຄ່າ ແຕ່ໃຫ້ຊື້ເອົາເລີຍຈະຖືກປັບໃໝ 50.000.000 ກີບ.

**ມາດຕາ 13 ການຈຳແນກປະຕິບັດໂດຍສະມາຄົມທຸລະກິດ**

ສະມາຄົມທຸລະກິດທີ່ຈຳແນກປະຕິບັດ ໂດຍການປະຕິເສດການຮັບເຂົ້າເປັນສະມາຊິກ ຫຼື ໃຫ້ຜູ້ດຳເນີນທຸລະກິດໃດໜຶ່ງ ຖອນຕົວອອກຈາກສະມາຄົມທຸລະກິດທີ່ບໍ່ເປັນທຳ ເພື່ອຜົນປະໂຫຍດ ໃນການແຂ່ງຂັນທາງທຸລະກິດ ລວມທັງການກະທຳທີ່ບໍ່ສະເໝີພາບ ຕໍ່ສະມາຊິກໃນສະມາຄົມທຸລະກິດຈະຖືກປັບໃໝ20.000.000 ກີບ.

**ມາດຕາ 14 ການຕົກລົງກັນເພື່ອຈຳກັດການແຂ່ງຂັນທາງທຸລະກິດ**

ບຸກຄົນ ຫຼື ນິຕິບຸກຄົນທີ່ຕົກລົງກັນເພື່ອຈຳກັດການແຂ່ງຂັນທາງທຸລະກິດ ໂດຍການໃຫ້ຄຳໝັ້ນສັນຍາຮ່ວມກັນຂອງຜູ້ດຳເນີນທຸລະກິດ ເພື່ອຈຸດປະສົງ ຫຼຸດຜ່ອນ, ບິດເບືອນ ແລະ/ຫຼື ຂັດຂວາງການແຂ່ງຂັນທາງທຸລະກິດ ຈະຖືກປັບໃໝ 10% (ສິບສ່ວນຮ້ອຍ)ຂອງລາຍຮັບທັງໝົດໃນປີຜ່ານມາ.

**ມາດຕາ 15 ການສວຍໃຊ້ ການຄອບຄອງຕະຫຼາດ ແລະ ການຜູກຂາດຕະຫຼາດ**

ບຸກຄົນ ຫຼື ນິຕິບຸກຄົນທີ່ສວຍໃຊ້ການຄອບຄອງຕະຫຼາດ ແລະ ການຜູກຂາດຕະຫຼາດ ເພື່ອຈຳກັດການແຂ່ງຂັນທາງທຸລະກິດຈະຖືກປັບໃໝ 10% (ສິບສ່ວນຮ້ອຍ) ຂອງລາຍຮັບທັງໝົດໃນປີຜ່ານມາ.

**ມາດຕາ 16 ການລວມຕົວເພື່ອຈຳກັດການແຂ່ງຂັນທາງທຸລະກິດ**

ວິສາຫະກິດຂະໜາດໃຫຍ່ ທີ່ດຳເນີນທຸລະກິດປະເພດດຽວກັນທີ່ລວມຕົວກັນໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະກຳມະການຄວບຄຸມການແຂ່ງຂັນທາງທຸລະກິດ ຫຼື ວິສາຫະກິດຂະໜາດນ້ອຍແລະກາງທີ່ລວມຕົວກັນແລ້ວ ບໍ່ແຈ້ງໃຫ້ຄະນະກຳມະການຄວບຄຸມການແຂ່ງຂັນທາງທຸລະກິດ ຈະຖືກປັບໃໝ 5% (ຫ້າສ່ວນຮ້ອຍ) ຂອງລາຍຮັບທັງໝົດໃນປີຜ່ານມາ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດໃນສະຖານດຽວກັນຫຼາຍຄັ້ງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດໃນສະຖານດຽວກັນຫຼາຍຄັ້ງ ຈະຖືກປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

1. ການລະເມີດຄັ້ງທີສອງຈະຖືກປັບໃໝ ສອງເທົ່າ ຂອງອັດຕາປັບໃໝ;
2. ການລະເມີດຄັ້ງທີສາມຈະຖືກປັບໃໝ ສາມເທົ່າ ຂອງອັດຕາປັບໃໝ ພ້ອມທັງສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາ ໂຈະ ຫຼື ຖອນ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນທີ່ກ່ຽວຂ້ອງ.

**ມາດຕາ 18 ມາດຕະການອື່ນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍແລະລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດນອກຈາກຈະຖືກປັບໃໝຕາມທີ່ກຳນົດໄວ້ໃນມາດຕາ 6 ຫາ ມາດຕາ16 ຂອງດຳລັດສະບັບນີ້ຍັງຈະຖືກນຳໃຊ້ມາດຕະການອື່ນຕາມແຕ່ລະກໍລະນີດັ່ງນີ້:

1. ຍຶດສິນຄ້າ,ວັດຖຸປະກອນແລະຍານພາຫະນະທີ່ນຳໃຊ້ເຂົ້າໃນການລະເມີດ;
2. ຍຶດຜົນກຳໄລທີ່ໄດ້ຈາກການລະເມີດ;
3. ໃຫ້ອອກມາສາລະພາບຕໍ່ສັງຄົມ;
4. ໃຫ້ປັບປຸງໂຄງສ້າງຂອງວິສາຫະກິດ.

## ໝວດທີ3
## ການຄຸ້ມຄອງສິນຄ້າທີ່ຖືກຍຶດແລະນຳໃຊ້ເງິນຈາກການປັບໃໝ

**ມາດຕາ 19 ການຄຸ້ມຄອງສິນຄ້າທີ່ຖືກຍຶດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ສິນຄ້າທີ່ຖືກຍຶດຈາກການລະເມີດກົດໝາຍ ແລະລະບຽບການ ກ່ຽວກັບການແຂ່ງຂັນທາງທຸລະກິດ.

ສິນຄ້າທີ່ໄດ້ຄຸນນະພາບ ຕ້ອງເກັບມ້ຽນ ແລະ ປົກປັກຮັກສາໃນສະຖານທີ່ ແລະ ເງື່ອນໄຂທີ່ເໝາະສົມເພື່ອນຳໄປໃຊ້ໃນການເຄື່ອນໄຫວວຽກງານໃຫ້ເກີດຜົນປະໂຫຍດສູງສຸດ ເປັນຕົ້ນ ການຊ່ວຍເຫຼືອສັງຄົມ, ວຽກງານລັດຖະການ, ການປະມູນຂາຍ ຕາມກົດໝາຍ ແລະ ລະບຽບການ.

ສິນຄ້າທີ່ບໍ່ໄດ້ຄຸນນະພາບ ຕ້ອງນຳເອົາໄປທຳລາຍ.

**ມາດຕາ 20 ການຄຸ້ມຄອງ ແລະ ນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ 60% (ຫົກສິບສ່ວນຮ້ອຍ)ມອບເຂົ້າງົບປະມານແຫ່ງລັດ, ສ່ວນເງິນທີ່ເຫຼືອ 40% (ສີ່ສິບສ່ວນຮ້ອຍ) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ໂດຍໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເປີດບັນຊີຄຸ້ມຄອງຜ່ານລະບົບຄັງເງິນແຫ່ງຊາດ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ເພື່ອນຳໃຊ້ບໍລິຫານວຽກງານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21ຂອງດຳລັດສະບັບນີ້.ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນຜູ້ສັ່ງການ ຫຼື ຜູ້ຖືກມອບສິດເປັນຜູ້ອະນຸມັດໃນແຕ່ລະຄັ້ງ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 21 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕ້ອງນຳໃຊ້ເຂົ້າໃນວຽກງານດັ່ງນີ້:

1.ໂຄສະນາ, ເຜີຍແຜ່, ປູກຈິດສຳນຶກໃຫ້ສັງຄົມເຫັນຄວາມສຳຄັນກ່ຽວກັບວຽກງານການແຂ່ງຂັນທາງທຸລະກິດ;

2.ລົງຕິດຕາມແລະກວດກາການຈັດຕັ້ງປະຕິບັດວຽກງານການແຂ່ງຂັນທາງທຸລະກິດ;

3.ເກັບມ້ຽນ, ປົກປັກຮັກສາ, ຄ່າຝາກສາງ,ເຄື່ອນຍ້າຍແລະທຳລາຍສິນຄ້າທີ່ຍຶດມາໄດ້;

4.ຄ່າໃຊ້ຈ່າຍໃນການບູລະນະກົງຈັກການຈັດຕັ້ງ, ຊື້ວັດຖຸປະກອນ,ແລະສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານແລະເຈົ້າໜ້າທີ່ແຂ່ງຂັນທາງທຸລະກິດ;

5.ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ຫຼື ຜູ້ແຈ້ງແຫຼ່ງຂ່າວ;

6.ຄ່າຈ້າງນັກກົດໝາຍ,ນັກເສດຖະສາດແລະທີ່ປຶກສາພາຍນອກໃນການດຳເນີນການສືບສວນ-ສອບສວນ;

7.ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານແລະເຈົ້າໜ້າທີ່ແຂ່ງຂັນທາງທຸລະກິດທີ່ເຮັດວຽກງານແຂ່ງຂັນທາງທຸລະກິດ;

8.ວຽກງານອື່ນກ່ຽວກັບການແຂ່ງຂັນທາງທຸລະກິດ.

## ໝວດທີ4
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ...........................ເປັນຕົ້ນໄປ.

**ຕາງໜ້າລັດຖະບານແຫ່ງສປປລາວ**
**ນາຍົກລັດຖະມົນຕີ**

ສາລະບານ


ໝວດທີ1ບົດບັນຍັດທົ່ວໄປ ........................................................................................1

ມາດຕາ1 ຈຸດປະສົງ ..........................................................................................1

ມາດຕາ 2 ການປັບໃໝແລະນຳໃຊ້ມາດຕະການອື່ນ ...............................................1

ມາດຕາ3 ການອະທິບາຍຄຳສັບ.............................................................................2

ມາດຕາ4 ຫຼັກການກ່ຽວກັບການປັບໃໝແລະນຳໃຊ້ມາດຕະການອື່ນ............................2

ມາດຕາ5 ຂອບເຂດການນຳໃຊ້...............................................................................2

ໝວດທີ2ອັດຕາການປັບໃໝແລະມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍແລະລະບຽບການກ່ຽວກັບການແຂ່ງຂັນທາງທຸລະກິດ 2

ມາດຕາ6 ການເຮັດໃຫ້ເຂົ້າໃຈຜິດ ..........................................................................2

ມາດຕາ7 ການລະເມີດຄວາມລັບທາງທຸລະກິດ..........................................................2

ມາດຕາ8 ການບັງຄັບໃນການດຳເນີນທຸລະກິດ..........................................................3

ມາດຕາ9 ການເຮັດໃຫ້ຜູ້ດຳເນີນທຸລະກິດອື່ນເຊື່ອມເສຍຊື່ສຽງ.......................................3

ມາດຕາ10 ການສ້າງອຸປະສັກຂັດຂວາງຕໍ່ການດຳເນີນທຸລະກິດ.......................................3

ມາດຕາ11 ການໂຄສະນາທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ............................................3

ມາດຕາ12 ການສົ່ງເສີມການຂາຍດ້ວຍວິທີທີ່ບໍ່ເປັນທຳ.............................................3

ມາດຕາ13 ການຈຳແນກປະຕິບັດໂດຍສະມາຄົມທຸລະກິດ ..........................................3

ມາດຕາ14 ການຕົກລົງກັນເພື່ອຈຳກັດການແຂ່ງຂັນທາງທຸລະກິດ ..................................3

ມາດຕາ15 ການສວຍໃຊ້ການຄອບຄອງຕະຫຼາດແລະການຜູກຂາດຕະຫຼາດ ......................4

ມາດຕາ16 ການລວມຕົວເພື່ອຈຳກັດການແຂ່ງຂັນທາງທຸລະກິດ.....................................4

ມາດຕາ17 ມາດຕະການອື່ນ..................................................................................4

ມາດຕາ18 ມາດຕະການຕໍ່ຜູ້ລະເມີດໃນສະຖານດຽວກັນຫຼາຍຄັ້ງ .....................................4

ໝວດທີ3ການຄຸ້ມຄອງແລະນຳໃຊ້ສິນຄ້າທີ່ຖືກຍຶດແລະເງິນຈາກການປັບໃໝ ...................4

ມາດຕາ19 ການຄຸ້ມຄອງແລະນຳໃຊ້ສິນຄ້າທີ່ຖືກຍຶດ..................................................4

ມາດຕາ20 ການຄຸ້ມຄອງແລະນຳໃຊ້ເງິນຈາກການປັບໃໝແລະການນຳໃຊ້ມາດຕະການອື່ນ.......5

ມາດຕາ21 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝແລະການນຳໃຊ້ມາດຕະການອື່ນ...........5

ໝວດທີ4ບົດບັນຍັດສຸດທ້າຍ .................................................................................5

ມາດຕາ22 ການຈັດຕັ້ງປະຕິບັດ...............................................................................5

ມາດຕາ23 ຜົນສັກສິດ ..........................................................................................5